University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Addressing inequalities in labour markets**

ການແກ້ໄຂຄວາມບໍ່ສະເໝີພາບໃນຕະຫຼາດແຮງງານ

**Short description:**

ອ່ານວິທີການທີ່ Yamila Pita ສະຫຼຸບເນື້ອໃນສຸດທ້າຍກ່ຽວກັບອຳນາດທັບຊ້ອນ ແລະ ຕະຫຼາດແຮງງານ.

**Content:**

ໃນອາທິດທີ່ຜ່ານມານີ້ ພວກເຮົາໄດ້ນຳສະເໜີແນວຄວາມຄິດທີ່ສຳຄັນສຳລັບການແກ້ໄຂບັນຫາຄວາມບໍ່ສະເໝີພາບເທົ່າທຽມກັນໃນຕະຫຼາດແຮງງານ: ການແບ່ງແຍກ. ຂໍ້ສະເໜີຂອງພວກເຮົາໃນການຍ້າຍຈາກມູມມອງດ້ານເພດສູ່ມູມມອງຂອງ ອຳນາດທັບຊ້ອນນັ້ນ, ອີງໃສ່ຄວາມຈິງທີ່ວ່າ ຍັງມີຄວາມບໍ່ສະເໝີພາບເທົ່າທຽມກັນ ແລະ ການແບ່ງແຍກທີ່ຫຼາກຫຼາຍໃນຕະຫຼາດແຮງງານ. ເຊິ່ງໝາຍຄວາມວ່ານອກເໜືອຈາກການເປັນສະຖາບັນເປັນກາງທາງເພດແລ້ວ (ດ້ວຍຜົນສະທ້ອນຕ່າງໆທີ່ຕາມມາຕໍ່ກັບຄວາມເສຍຫາຍຂອງແມ່ຍິງທີ່ເກີດຂຶ້ນ) ນັ້ນເປັນຊ່ອງຫວ່າງທີ່ຖືກຂີດໝາຍ ໂດຍຮູບແບບຂອງຄວາມບໍ່ສະເໝີພາບແບບອື່ນໆທີ່ທັບຊ້ອນກັບຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ. ວິທີການຕ່າງໆໃນການຈັດການຕະຫຼາດແຮງງານໄດ້ສະທ້ອນເຖິງໂຄງສ້າງທາງສັງຄົມຂອງປະເທດ ແລະ ນັ້ນກໍເຮັດໃຫ້ເກີດຄວາມບໍ່ເທົ່າທຽມກັນຈາກໂຄງສ້າງດັ່ງກ່າວ. ໃນກໍລະນີນີ້ ເຫັນໄດ້ຊັດເຈນວ່າ ເພດບໍ່ແມ່ນພຽງໜວດດຽວຂອງປະສົບການ ແລະ ການວິເຄາະ ແລະ ດັ່ງນັ້ນ ຈຶ່ງບໍ່ຄວນຄິດວ່າເປັນເອກະລາດ. ເຄື່ອງໝາຍທາງສັງຄົມອື່ນໆ (ຍົກຕົວຢ່າງ, ກຸ່ມຊົນຊັ້ນວັນນະ) ຄວນຖືກນຳມາພິຈາລະນາຮ່ວມດ້ວຍ, ເນື່ອງຈາກສິ່ງເຫຼົ່ານີ້ກໍເປັນປັດໃຈທີ່ກຳນົດໃຫ້ມີການເຂົ້າໄປ ແລະ ມີສ່ວນຮ່ວມໃນຕະຫຼາດແຮງງານ. ການພິຈາລະນາດ້ານປະຕິສຳພັນຂອງເກນການແບ່ງແຍກຕ່າງໆ ເຮັດໃຫ້ພວກເຮົາຄິດໄດ້ວ່າບໍ່ແມ່ນແຮງງານທຸກຄົນ ທີ່ຈະປະເຊີນກັບສະພາບຂອງຄວາມສ່ຽງ ແລະ ບໍ່ໝັ້ນຄົງຄືກັນໝົດ. ດັ່ງນັ້ນເຮົາຄວນຫຼີກລ່ຽງການປົນເປຂອງປະສົບການຂອງຜູ້ຄົນ ແລະ ວິເຄາະ ແລະ ແກ້ໄຂຄວາມບໍ່ສະເໝີພາບເທົ່າທຽມກັນຜ່ານຊ່ອງທາງຂອງການແບ່ງແຍກ. (We must therefore avoid homogenising people's experiences and analyse and address multiple inequalities through the prism of intersectionality).

ການລະບາດຄັ້ງໃຫຍ່ຂອງພະຍາດໂຄວິດ 19 ຍັງຖືກນຳມາສະເໜີເປັນຕົວຢ່າງທີ່ສະແດງໃຫ້ເຫັນເຖິງຄວາມກ່ຽວຂ້ອງຂອງອຳນາດທັບຊ້ອນ. ດັ່ງທີ່ພວກເຮົາໄດ້ເຫັນແລ້ວວ່າ

ວິກິດຈາກການລະບາດໃນຄັ້ງນີ້ ບໍ່ໄດ້ເປັນພຽງແຕ່ວິກິດທາງດ້ານສຸຂະພາບເທົ່ານັ້ນ ແຕ່ຍັງເປັນວິກິດທາງດ້ານເສດຖະກິດ ແລະ ສັງຄົມ ເຊິ່ງສົ່ງຜົນກະທົບຕໍ່ທຸກຄົນບໍ່ເທົ່າທຽມກັນ. ແມ່ຍິງ ໂດຍສະເພາະຜູ້ທີ່ຢູ່ໃນກຸ່ມຄົນດ້ອຍໂອກາດ ແມ່ນໄດ້ຮັບຜົນກະທົບທີ່ບໍ່ສົມສ່ວນ. ອີກຄັ້ງໜຶ່ງ, ຄວາມຈຳເປັນໃນການເຂົ້າໃຈວິທີການແບ່ງແຍກການກົດຂີ່ໃນໝວດຕ່າງໆ (ເຊັ່ນ ຊົນຊັ້ນ, ຄວາມພິການ, ຊົນເຜົ່າ, ສະຖານະພາບການຍ້າຍຖິ່ນ, ເຊື້ອຊາດ, ສາສະໜາ, ເພດ ແລະ ອື່ນໆ) ມີສ່ວນເຮັດໃຫ້ສະຖານະການນີ້ເກີດຂຶ້ນ. ຍິ່ງໄປກວ່ານັ້ນ, ການພິຈາລະນາຈາກສິ່ງເຫຼົ່ານີ້ ເປັນຫົວໃຈສຳຄັນຂອງຄວາມຄິດກ່ຽວກັບການດຳເນີນການຂອງພາກລັດ ແລະ ການອອກແບບ ລວມເຖິງການປະຕິບັດນະໂຍບາຍສາທາລະນະທີ່ມຸ່ງບັນເທົາຜົນກະທົບຈາກວິກິດນີ້. ດັ່ງນັ້ນ ຈຶ່ງຈຳເປັນທີ່ການກຳນົດນະໂຍບາຍນັ້ນ ມີຄວາມສາມາດໃນການຕອບສະໜອງໃຫ້ແກ່ການປະສົບ ແລະ ບັນຫາຕ່າງໆຂອງຄົນເຮົາ. ແນ່ນອນວ່າ ນະໂຍບາຍຕະຫຼາດແຮງງານກໍບໍ່ມີຂໍ້ຍົກເວັ້ນເຊັ່ນດຽວກັນ: ມີຄວາມຈຳເປັນທີ່ຕ້ອງໄດ້ຄຳນຶງເຖິງຄວາມຊັບຊ້ອນຂອງໂຄງສ້າງທາງສັງຄົມ ແລະ ເພື່ອໃຫ້ຄວາມເອົາໃຈໃສ່ສະເພາະຕໍ່ກັບຄວາມທັບຊ້ອນຂອງຂໍ້ເສຍຕ່າງໆ (ສິ່ງທີ່ນອກເໜືອຈາກຄວາມບໍ່ສະເໝີພາບເທົ່າທຽມກັນທີ່ລະບຸຢ່າງງ່າຍດາຍ).

ໃນຈຸດນີ້ ເປັນທີ່ຈະແຈ້ງວ່າຫົວຂໍ້ຕ່າງໆ ທີ່ເຮົາໄດ້ເຮັດວຽກຮ່ວມກັນໃນສອງສາມອາທິດຜ່ານມາເຊື່ອມໂຍງກັນຢ່າງແຍກຈາກກັນບໍ່ໄດ້. ເປັນໄປບໍ່ໄດ້ເລີຍທີ່ຈະຄິດເຖິງຕະຫຼາດແຮງງານທີ່ມີຄວາມເປັນທຳ ແລະ ສະພາບການເຮັດວຽກທີ່ເໝາະສົມຫຼາຍຂຶ້ນ ໂດຍປາສະຈາກການທີ່ບໍ່ຄຳນຶງເຖິງຄວາມຈິງທີ່ວ່າ ຄວາມບໍ່ເທົ່າທຽມກັນໃນໂລກຂອງການເຮັດວຽກ ມີຮາກຖານມາຈາກໂຄງສ້າງທາງສັງຄົມ. ຄວາມເຂົ້າໃຈທີ່ວ່າ ຕະຫຼາດແຮງງານບໍ່ແມ່ນສະຖາບັນທີ່ເປັນກາງນັ້ນ ເປັນບາດກ້າວທຳອິດສູ່ການພັດທະນານະໂຍບາຍ ທີ່ຈະຮັບປະກັນເຖິງໂອກາດດ້ານຄວາມສະເໝີພາບເທົ່າທຽມກັນສຳລັບທຸກຄົນ.